**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4460/ກປ

ນະຄອນຫຼວງວຽງຈັນ, ວັນທີ 03 NOV 2023

# ຄຳສັ່ງ
## ກ່ຽວກັບ ການສ້າງຂະບວນການສັກຢາກັນພະຍາດສັດ ແຫ່ງຊາດ ວັນທີ 11 ພະຈິກ 2023 (11 ຕຸລາ 2008 ຫາ 11 ຕຸລາ 2023) ຄົບຮອບ 15 ປີ

**ເຖິງ: - ຫ້ອງການ, ບັນດາກົມ ແລະ ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;**
**- ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ.**

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຕາມໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 4338/ກລປ, ລົງວັນທີ 27 ຕຸລາ 2023;
- ອີງຕາມ ການຄົ້ນຄ້ວາ ແລະ ສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ຕຸລາ 2023.

ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ໄດ້ກຳນົດເອົາ ວັນທີ 11 ພະຈິກ ຂອງທຸກໆ ປີ ເປັນວັນສັກຢາກັນພະຍາດສັດ ແຫ່ງຊາດ ໂດຍຖືເອົາວັນດັ່ງກ່າວ ເປັນການປຸກລະດົມ, ສ້າງຈິດສຳນຶກ ແລະ ກຳລັງແຮງທົ່ວປວງຊົນ ເພື່ອປ້ອງກັນ ແລະ ເຝົ້າລະວັງ ບໍ່ໃຫ້ເກີດພະຍາດສັດໃນຝູງສັດລ້ຽງຂອງປະຊາຊົນ, ຕິດພັນກັບການຍົກສູງສະຕິເປັນເຈົ້າ ໃນການປ້ອງກັນ ແລະ ຮັກສາສຸຂະພາບສັດລ້ຽງຂອງຕົນ ຕາມທິດນຳ ທີ່ວ່າ: **ຖືເອົາການປ້ອງກັນເປັນຕົ້ນຕໍ ເອົາການປິ່ນປົວເປັນສຳຄັນ**.

ເພື່ອຈັດຕັ້ງປະຕິບັດເນື້ອໃນຈິດໃຈດັ່ງກ່າວ, ໃນໄລຍະຜ່ານມາ ຂະແໜງການກະສິກຳ ແລະ ປ່າໄມ້ ກໍຄື ອົງການປົກຄອງທ້ອງຖິ່ນ ໄດ້ຖືເອົາການສັກຢາກັນພະຍາດສັດ ເປັນໜຶ່ງໃນມາດຕະການປ້ອງກັນ ແລະ ຄວບຄຸມ ພະຍາດລະບາດສັດ ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ປີ 2008 ຈົນເຖິງປະຈຸບັນ ຊຶ່ງເຫັນໄດ້ອັດຕາການສັກຢາກັນພະຍາດສັດ ລ້ຽງແບບເປັນຟາມ ສັກໄດ້ເກືອບ ຮ້ອຍສ່ວນຮ້ອຍ (100%), ສັດລ້ຽງອ້ອມຊານເມືອງ ແລະ ເຂດຊົນນະບົດໄດ້ຫຼາຍກວ່າ ຫົກສິບສ່ວນຮ້ອຍ (60%) ແລະ ເຂດຫ່າງໄກສອກຫຼີກໄດ້ຫຼາຍກວ່າ ສາມສິບສ່ວນຮ້ອຍ (30%) ສາມາດສ້າງພູມຄຸ້ມກັນຕ້ານຕໍ່ພະຍາດສັດ ໃຫ້ແກ່ສັດລ້ຽງຢູ່ໃນລະດັບດີ ແລະ ມີປະສິດທິຜົນ,

ເຮັດໃຫ້ການລ້ຽງສັດຂອງປະຊາຊົນມີການຂະຫຍາຍຕົວເພີ່ມຂຶ້ນ ຕາມຄາດໝາຍທີ່ວາງໄວ້. ແຕ່ເຖິງຢ່າງໃດກໍ່ຕາມ, ພະຍາດສັດ ກໍຍັງເກີດມີການລະບາດຂຶ້ນ ຢູ່ກັບສັດລ້ຽງທີ່ບໍ່ໄດ້ຮັບການສັກຢາປ້ອງກັນ ໃນແຕ່ລະປີ ເຊັ່ນ: ພະຍາດອະຫິວາໝູອາຟຣິກາ, ພະຍາດເຕົ້ານົມເລືອດ ງົວ-ຄວາຍ, ພະຍາດສັດປີກ ແລະ ພະຍາດວໍ້. ສະເພາະປີ 2023 ນີ້, ຍັງມີການລາຍງານການລະບາດຂອງພະຍາດສັດ ຢູ່ຫຼາຍທ້ອງຖິ່ນ ໃນ ສປປ ລາວ ຢ່າງຕໍ່ເນື່ອງ ຊຶ່ງເປັນໄພຂົ່ມຂູ່ ແລະ ສົ່ງຜົນກະທົບໂດຍກົງ ຕໍ່ກັບ ພາກລັດ ແລະ ຜູ້ລ້ຽງສັດ, ສ້າງຜົນເສຍຫາຍທາງດ້ານຊັບສິນ ເງິນ, ຄໍາ ໃຫ້ແກ່ການລ້ຽງສັດຂອງປະຊາຊົນ ແລະ ຜູ້ປະກອບການ, ລັດຖະບານຕ້ອງສູນເສຍງົບປະມານໃນການເຝົ້າລະວັງ, ສະກັດກັ້ນ ແລະ ໂຕ້ຕອບພະຍາດທີ່ເກີດຂຶ້ນຢ່າງຫຼວງຫຼາຍ ທັງເປັນສິ່ງກີດຂວາງທາງດ້ານການຄ້າຢູ່ພາຍໃນ ກໍຄືການສົ່ງສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ.

ເພື່ອປ້ອງກັນສັດລ້ຽງ ບໍ່ໃຫ້ເປັນພະຍາດ, ທັງເປັນການຍູ້ແຮງວຽກງານກັນພະຍາດສັດ ໃຫ້ແຂງແຮງກວ່າເກົ່າ ແນໃສ່ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນ ແລະ ເປັນການປູກຈິດສໍານຶກ ຕໍ່ການພັດທະນາການລ້ຽງສັດ ໄປຄວບຄູ່ກັບການສັດຕະວະແພດ ຕາມທິດນໍາທີ່ວ່າ: **"ຖືເອົາການກັນພະຍາດເປັນຕົ້ນຕໍ ເອົາການຄວບຄຸມ ແລະ ກໍາຈັດພະຍາດເປັນສໍາຄັນ"**, ທັງເປັນການສືບຕໍ່ຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ທີ່ໄດ້ກໍານົດເອົາ ວັນທີ 11 ພະຈິກ ຂອງທຸກໆປີ ເປັນວັນສັກຢາກັນພະຍາດສັດ ແຫ່ງຊາດ ໃຫ້ເປັນຂະບວນຟົດຟື້ນກວ່າປີທີ່ຜ່ານມາ ນັ້ນ,

## ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ອອກຄໍາສັ່ງ:

1. ໃຫ້ ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ສືບຕໍ່ໂຄສະນາເຜີຍແຜ່ ກົດໝາຍ, ດໍາລັດ, ຄໍາສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບວຽກງານລ້ຽງສັດ ແລະ ການສັດຕະວະແພດ ໃຫ້ແກ່ ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພໍ່ຄ້າ-ຊາວຂາຍ, ຊາວກະສິກອນ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ດ້ວຍຫຼາຍຮູບແບບ ເປັນຕົ້ນ ໂຄສະນາຜ່ານສື່ມວນຊົນຕ່າງໆ ເຊັ່ນ: ໂທລະພາບ, ວິທະຍຸ, ຈັດກິດຈະກໍາຖາມ-ຕອບ, ສະແດງຮູບພາບ, ສາຍວີດີໂອ, ແຜ່ນພັບ ແລະ ປົດສະເຕີ້, ຈັດກອງປະຊຸມສໍາມະນາ, ປາຖະກະຖາ ໂດຍຍົກໃຫ້ເຫັນຄວາມສໍາຄັນ ຂອງການເຝົ້າລະວັງ, ປ້ອງກັນ ແລະ ຕ້ານພະຍາດສັດ ລວມທັງຄວາມເສຍຫາຍ ທີ່ເກີດຈາກການຖືເບົາ ຕໍ່ວຽກງານສັກຢາກັນພະຍາດສັດ ແລະ ຕັ້ງໜ້າປະຕິບັດ ຕາມທິດນໍາ: **"ການກັນພະຍາດສັດ ເປັນໜ້າທີ່ຂອງທົ່ວປວງຊົນ"**;
2. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ ຮີບຮ້ອນ ຄົ້ນຄວ້າ ແລະ ນໍາສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແຕ່ງຕັ້ງຄະນະຮັບຜິດຊອບ ສ້າງຂະບວນການສັກຢາກັນພະຍາດສັດ ແຫ່ງຊາດ ປະຈໍາປີ 2023 ຊຶ່ງປະກອບດ້ວຍ ທ່ານຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນຫົວໜ້າ, ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງວຽງຈັນ ເປັນຮອງ ແລະ ບັນດາພະແນກການກ່ຽວຂ້ອງ ເປັນຄະນະ ເພື່ອເຮັດໜ້າທີ່ຊີ້ນໍາ-ນໍາພາ ຂະບວນການສັກຢາກັນພະຍາດສັດແຫ່ງຊາດ ຕະຫຼອດເດືອນພະຈິກ 2023 ນີ້ ໃຫ້ເປັນຂະບວນກວ້າງຂວາງ ແລະ ຟົດຟື້ນ ໃນທ້ອງຖິ່ນຄວາມຮັບຜິດຊອບຂອງຕົນ;
3. ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຂຶ້ນແຜນຄວາມຕ້ອງການຢາກັນພະຍາດ ສໍາລັບມື້ເປີດຂະບວນການສັກຢາກັນພະຍາດສັດ ໃນວັນທີ 11 ພະຈິກ 2023 ແລ້ວສົ່ງໃຫ້ ກົມລ້ຽງສັດ ແລະ ການປະມົງ ເພື່ອຜະລິດ ແລະ ສະໜອງໃຫ້ຕາມຄວາມເໝາະສົມ; ສໍາລັບງົບປະມານຮັບໃຊ້ ໃນການເຄື່ອນໄຫວການສ້າງຂະບວນການສັກຢາກັນພະຍາດ

ສັດ ເປັນຕົ້ນ ງົບປະມານໃນການລົງເຄື່ອນໄຫວ, ຈັດຊື້ຢາກັນພະຍາດ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ແມ່ນມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ ໂດຍປຸກລະດົມ ຂົນຂວາຍ ແລະ ຍາດແຍ່ງ ການຊ່ວຍເຫຼືອ ຈາກພາກສ່ວນກ່ຽວຂ້ອງ ພາຍໃນທ້ອງຖິ່ນຕົນ;

4. ສຳລັບການຈັດພິທີ ເນື່ອງໃນວັນສັກຢາກັນພະຍາດສັດ ແຫ່ງຊາດ ວັນທີ 11 ພະຈິກ 2023 ນີ້, ຕ້ອງຮັບປະກັນເນື້ອໃນເປັນຕົ້ນຕໍ ແລະ ຮູບການເປັນສຳຄັນ ບົນຈິດໃຈປະຢັດມັດທະຍັດ ແລະ ຕ້ານການຟູມເຟືອຍ; ສ່ວນທ້ອງຖິ່ນທີ່ມີເງື່ອນໄຂ ກໍໃຫ້ມີຂະບວນການແຂ່ງຂັນປະກວດສັດລ້ຽງປະເພດຕ່າງໆ ຕາມທິດນຳ **"ສັດພັນດີ, ສຸຂະພາບແຂງແຮງ ແລະ ມີຄວາມສົມບູນສວຍງາມ"** ເພື່ອເປັນການໂຄສະນາເຜີຍແຜ່ ການນຳໃຊ້ແນວພັນສັດລ້ຽງທີ່ດີ ແລະ ມີຄຸນນະພາບສູງ; ສ່ວນເຂດຈຸດສຸມພັດທະນາ, ເຂດທີ່ກຳນົດຈະສ້າງເປັນເຂດປອດພະຍາດສັດ ແລະ ບ້ານຈຸດສຸມ ສາມ ສ້າງ ນັ້ນ ໃຫ້ເອົາໃຈໃສ່ ປຸກລະດົມຊາວກະສິກອນ, ປະຊາຊົນ ເພື່ອໃຫ້ຄວາມຮ່ວມມື ບໍລິການສັກຢາກັນພະຍາດສັດ ໃຫ້ໄດ້ຫຼາຍກວ່າ ເກົ້າສິບສ່ວນຮ້ອຍ (90%) ຂອງຝູງສັດ; ທັງນີ້, ກໍເພື່ອໃຫ້ກາຍເປັນຕົວແບບໃນການປ້ອງກັນ ແລະ ຮັກສາສຸຂະພາບສັດລ້ຽງ ໃຫ້ມີພູມຄຸ້ມກັນຕ້ານທານກັບພະຍາດລະບາດສັດສູງ;

5. ໃນຊ່ວງທ້າຍລະດູຝົນ ຕົ້ນລະດູໜາວນີ້, ໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ເພີ່ມທະວີວຽກງານໂຄສະນາເຜີຍແຜ່, ແນະນຳ ຊຸກຍູ້ຊາວກະສິກອນຜູ້ລ້ຽງສັດ ປຸກສ້າງຄອກໃຫ້ສັດລ້ຽງຢ່າງເໝາະສົມ ເພື່ອຫຼີກລ່ຽງຜົນກະທົບໂດຍກົງ ຈາກການປ່ຽນແປງຂອງດິນຟ້າອາກາດ, ເອົາໃຈໃສ່ໃຫ້ສັດລ້ຽງໄດ້ຮັບອາຫານພຽງພໍ, ຮູ້ຮັກສາສຸຂະພາບສັດລ້ຽງ ຂອງຕົນ, ປະຕິບັດມາດຕະການປ້ອງກັນຄວາມປອດໄພທາງດ້ານຊີວະພາບທີ່ດີ ເປັນຕົ້ນແມ່ນ ການລ້ຽງສັດໃຫຍ່, ໝູ ແລະ ສັດປີກ ໂດຍໃຫ້ເອົາໃຈໃສ່ລ້ຽງຂັງໄວ້ໃນຄອກ, ບໍ່ປ່ອຍຊະຊາຍ, ມີການອະນາໄມຂ້າເຊື້ອຄອກ ແລະ ພື້ນທີ່ອ້ອມຮອບເປັນປະຈຳ, ອັນສຳຄັນ ແມ່ນການປູກຫຍ້າລ້ຽງສັດ, ເກັບຮັກສາເຟືອງ, ປຸງແຕ່ງກ້ອນແຮ່ທາດ-ອາຫານເສີມ ເພື່ອຮັບປະກັນໃຫ້ສັດລ້ຽງ ບໍ່ຂາດເຂີນອາຫານໃນລະດູແລ້ງ;

6. ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ ຊຸກຍູ້ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານໃນຄັ້ງນີ້ ເພື່ອຊອກໃຫ້ເຫັນບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ ທີ່ດີເດັ່ນ ທີ່ໄດ້ປະກອບສ່ວນເຫື່ອແຮງ ແລະ ທຶນຮອນ ເຂົ້າໃນການກັນພະຍາດສັດ ເພື່ອເປັນບ່ອນອີງໃນການສະເໜີ ອົງການປົກຄອງຂັ້ນຂອງຕົນ ຕົກລົງຍ້ອງຍໍ, ຊົມເຊີຍ ຕາມຄວາມເໝາະສົມ ແລະ ສອດຄ່ອງກັບ ດຳລັດ ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22 ເມສາ 2019;

7. ສຳລັບການຈັດຕັ້ງປະຕິບັດຕົວຈິງ ຫາກມີຂໍ້ຫຍຸ້ງຍາກ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ ເປັນແຕ່ລະໄລຍະ ເພື່ອຫາວິທີການແກ້ໄຂ ຢ່າງທັນການ.

ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ປອ. ເພັດ ພົມພິພັກ